ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 15 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຂອງບໍລິສັດພາຍໃນ ສປປ ລາວ ເພື່ອຄຸ້ມຄອງວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ມີປະສິດທິພາບ ແນໃສ່ຮັບປະກັນເຮັດໃຫ້ການເຄື່ອນໄຫວວຽກງານການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແມ່ນການລະດົມທຶນຂອງບໍລິສັດ ດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮຸ້ນກູ້** ໝາຍເຖິງ ຫຼັກຊັບປະເພດໜີ້ ທີ່ບໍລິສັດນຳໃຊ້ເປັນເຄື່ອງມືລະດົມທຶນ ຊຶ່ງແບ່ງເປັນໜ່ວຍແຕ່ລະໜ່ວຍມີມູນຄ່າເທົ່າກັນ, ກຳນົດຜົນຕອບແທນໄວ້ລ່ວງໜ້າໃນອັດຕາສ່ວນເທົ່າກັນ ແລະ ຜູ້ຖືຮຸ້ນກູ້ມີຖານະເປັນເຈົ້າໜີ້ຂອງບໍລິສັດ;

2. **ຮຸ້ນກູ້ປ່ຽນສະພາບ** ໝາຍເຖິງ ຮຸ້ນກູ້ທີ່ສາມາດປ່ຽນສະພາບເປັນ ຮຸ້ນຂອງບໍລິສັດ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;

3. **ຜູ້ຄ້ຳປະກັນການຊຳລະໜີ້ຮຸ້ນກູ້ຢູ່ຕ່າງປະເທດ** ໝາຍເຖິງ ນິຕິບຸກຄົນ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດຢູ່ໃນ ສປປ ລາວ ທີ່ເຮັດໜ້າທີ່ເປັນຜູ້ຄ້ຳປະກັນການຊຳລະໜີ້ຮຸ້ນກູ້ຢູ່ຕ່າງປະເທດ ຕາມການອະນຸຍາດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. **ບໍລິສັດ** ໝາຍເຖິງ ບໍລິສັດມະຫາຊົນ, ບໍລິສັດຈົດທະບຽນ ແລະ ບໍລິສັດຈຳກັດ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ.

**ມາດຕາ 4 ຫຼັກການ**

ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ໄດ້ຮັບໃບຢັ້ງຢືນການຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ລົງທຶນ;
3. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
4. ຮັບປະກັນການ ຄຸ້ມຄອງ, ຕິດຕາມ ແລະ ກວດກາ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ.

## ໝວດທີ 2
## ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ

**ມາດຕາ 6 (ປັບປຸງ) ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 28 ວັກທີສອງ. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ສ້າງຕັ້ງຂຶ້ນຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ໄດ້ດຳເນີນທຸລະກິດຢ່າງໜ້ອຍ 3 ປີ ຕໍ່ເນື່ອງ ຍົກເວັ້ນ ບໍລິສັດ ທີ່ມີການ ແຍກ, ຄວບ ຫຼື ຫັນເປັນບໍລິສັດຮູບແບບໃໝ່ຈາກ ວິສາຫະກິດ ຫຼື ບໍລິສັດເດີມ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 3 ປີ;

2. ມີເອກະສານລາຍງານການເງິນ 1 ປີ ຄືນຫຼັງ ສຳລັບ ບໍລິສັດຈົດທະບຽນ ແລະ 3 ປີ ຄືນຫຼັງ ສຳລັບ ບໍລິສັດທີ່ບໍ່ໄດ້ຈົດທະບຽນ ໃນຕະຫຼາດຫຼັກຊັບ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ໂດຍໄດ້ຮັບການກວດສອບຈາກ ບໍລິສັດກວດສອບ ທີ່ໄດ້ຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ມີກຳໄລ 1 ປີ ຄືນຫຼັງ ສຳລັບບໍລິສັດຈົດທະບຽນ ແລະ ກຳໄລສະເລ່ຍ 3 ປີ ຄືນຫຼັງ ຕິດຕໍ່ກັນ ສຳລັບ ບໍລິສັດທີ່ບໍ່ໄດ້ຈົດທະບຽນ ໃນຕະຫຼາດຫຼັກຊັບ ນັບແຕ່ວັນທີ່ໄດ້ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງກຳໄລດັ່ງກ່າວ ຕ້ອງພຽງພໍໃນການຊຳລະດອກເບ້ຍຂອງຮຸ້ນກູ້ຢູ່ຕ່າງປະເທດທັງໝົດໃນ 1 ປີ ຕໍ່ໜ້າ;

4. ສຳລັບ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜົນການລຳດັບຄວາມໜ້າເຊື່ອຖືບໍ່ຕໍ່າກວ່າ BBB;

5. ສຳລັບ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີປະຫວັດທີ່ດີໃນການຊຳລະຕົ້ນທຶນ, ດອກເບ້ຍ ແລະ ພາລະຜູກພັນທາງການເງິນອື່ນໆ ໃນໄລຍະ 3 ປີ ຄືນຫຼັງນັບແຕ່ວັນທີ່ໄດ້ຍື່ນ ຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;

6. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 (ປັບປຸງ) ເອກະສານປະກອບການຮ້ອງຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ເອກະສານປະກອບການຮ້ອງຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ປະກອບມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາ ໃບທະບຽນວິສາຫະກິດ ແລະ ໃບທະບຽນການສຳປະທານ ກໍລະນີເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນການມອບອາກອນ;
4. ມະຕິຂອງກອງປະຊຸມຜູ້ຖືຮຸ້ນຮັບຮອງ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ;
5. ເອກະສານລາຍງານການເງິນ 1 ປີຄືນຫຼັງ ສຳລັບ ບໍລິສັດຈົດທະບຽນ ແລະ 3 ປີ ຄືນຫຼັງ ສຳລັບບໍລິສັດທີ່ບໍ່ໄດ້ຈົດທະບຽນ ໃນຕະຫຼາດຫຼັກຊັບ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເປັນຕົ້ນໄປ. ກໍລະນີ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນ ປະຈຳ 6 ເດືອນ ຕົ້ນປີໂດຍຜ່ານການທົບທວນຈາກ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການຊຳລະ ຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການຊຳລະດັ່ງກ່າວ;
7. ຮ່າງໜັງສືຊວນຊື້ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານຫຼັກຊັບ ຂອງຕ່າງປະເທດ;
8. ບົດວິພາກໂຄງການ ແລະ ໃບອະນຸຍາດ ກ່ຽວກັບໂຄງການລົງທຶນຈາກລັດຖະບານ ທີ່ຈະນຳໃຊ້ແຫຼ່ງທຶນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ກໍລະນີ ທີ່ເປັນການລົງທຶນໃນໂຄງການຕ່າງໆ;
9. ບົດລາຍງານການຈັດລຳດັບຄວາມໜ້າເຊື່ອຖື ສຳລັບ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ;
10. ຮ່າງສັນຍາຄ້ຳປະກັນການຊຳລະໜີ້ຮຸ້ນກູ້ຢູ່ຕ່າງປະເທດ ກັບ ຜູ້ຄ້ຳປະກັນການຊຳລະໜີ້ (ຖ້າມີ);
11. ເອກສານຢັ້ງຢືນປະຫວັດການຊຳລະ ຕົ້ນທຶນ, ດອກເບ້ຍ ແລະ ພາລະຜູກພັນທາງການເງິນອື່ນໆ ໃນໄລຍະ 3 ປີ ຄືນຫຼັງ ສຳລັບ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ.
12. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 (ປັບປຸງ) ການພິຈາລະນາການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາໃນການອອກໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ພາຍໃນເວລາ 45 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບຂໍໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ ໂດຍການປະສານສົມທົບກັບ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ໃນເວລາ ພິຈາລະນາການອອກໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ລວມທັງເອກະສານຢັ້ງຢືນການກວດສອບຈາກ ບໍລິສັດກວດສອບ ຫຼື ເຊີນບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ ຫຼື ລົງເກັບກໍາຂໍ້ມູນ.

**ມາດຕາ 9 ອາຍຸຂອງໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີອາຍຸ 1 ປີ ນັບແຕ່ວັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ອອກໃບຢັ້ງຢືນດັ່ງກ່າວ ເປັນຕົ້ນໄປ. ກໍລະນີ ບໍລິສັດ ບໍ່ສາມາດອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕາມກໍານົດເວລາດັ່ງກ່າວ ຖ້າຫາກມີຄວາມຕ້ອງການຈະສືບຕໍ່ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີຂໍໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຄືນໃໝ່.

**ມາດຕາ 10 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈໍາໜ່າຍກູ້ຢູ່ຕ່າງປະເທດ**

ບໍລິສັດ ຕ້ອງເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງຕ່າງປະເທດ. ສໍາລັບ ບໍລິສັດຈົດທະບຽນ ຫາກອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຍັງຕ້ອງໄດ້ເປີດເຜີຍຂໍ້ມູນຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບຂອງ ສປປ ລາວ.

**ມາດຕາ 11 (ປັບປຸງ) ການລາຍງານຜົນການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດ ທີ່ໄດ້ອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງລາຍງານຜົນການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຢ່າງເປັນລາຍລັກອັກສອນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 10 ວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ເປັນຕົ້ນໄປ ພ້ອມທັງສໍາເນົາ ໜັງສືຊວນຊື້, ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້, ສັນຍາຄໍ້າປະກັນການຊໍາລະໜີ້ (ຖ້າມີ), ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ແລະ ສັນຍາການແຕ່ງຕັ້ງຕົວແທນການຊໍາລະເງິນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບ ການໂອນເງິນເຂົ້າມາ ສປປ ລາວ ຂອງບໍລິສັດທີ່ສໍາເລັດການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກໍານົດໄວ້ ຢ່າງເຂັ້ມງວດ.

**ມາດຕາ 12 (ປັບປຸງ) ພັນທະຂອງບໍລິສັດອອກຈໍາໜຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດທີ່ອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງມີພັນທະ ດັ່ງນີ້:

1. ເສຍຄ່າບໍລິການທີ່ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ໃຫ້ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ນຳໃຊ້ທຶນທີ່ລະດົມໄດ້ໃຫ້ຖືກຕ້ອງຕາມ ແຜນການ ແລະ ເປົ້າໝາຍ ຕາມທີ່ກຳນົດໄວ້ໃນໜັງສືຊວນຊື້;

3. ຮັບຜິດຊອບຕໍ່ການຊຳລະ ຕົ້ນທຶນ ແລະ ດອກເບ້ຍ ໃຫ້ແກ່ຜູ້ຖືຄອງຮຸ້ນກູ້ຕາມກຳນົດເວລາ;

4. ລາຍງານ ການນຳໃຊ້ທຶນທີ່ລະດົມໄດ້, ການຊຳລະຕົ້ນທຶນ ແລະ ດອກເບ້ຍ, ຄວາມຄືບໜ້າ ແລະ ຜົນການດຳເນີນງານ ຂອງໂຄງການ ຫຼື ກິດຈະການທີ່ລົງທຶນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ຈົນກວ່າຄົບກຳນົດອາຍຸການໄຖ່ຖອນຮຸ້ນກູ້ ແລະ ນຳໃຊ້ທຶນທີ່ລະດົມໄດ້ໝົດ ເປັນຕົ້ນໄປ;

5. ລາຍງານ ກ່ຽວກັບເປົ້າໝາຍການນຳໃຊ້ທຶນໃໝ່ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງເປົ້າໝາຍການນຳໃຊ້ທຶນທີ່ລະດົມໄດ້ ເປັນຕົ້ນໄປ ຍົກເວັ້ນ ບໍລິສັດຈົດທະບຽນ;

6. ປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ອົງການຄຸ້ມຄອງວຽກງານຫຼັກຊັບຂອງປະເທດທີ່ບໍລິສັດໄປອອກຈຳໜ່າຍຮຸ້ນກູ້;

7. ພັນທະອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 13 ຄ່າບໍລິການກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງເສຍຄ່າບໍລິການ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ 15.000.000 ກີບ ແລະ ຕ້ອງຊຳລະພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ຄ່າອອກໃບຢັ້ງຢືນການຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນກູ້ທັງໝົດທີ່ອອກຈຳໜ່າຍໃນແຕ່ລະຄັ້ງ ແຕ່ບໍ່ໃຫ້ຕ່ຳກວ່າ 30.000.000 ກີບ ແລະ ຕ້ອງຊຳລະພາຍໃນເວລາ 30 ວັນ ນັບແຕ່ວັນສຳເລັດການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ເປັນຕົ້ນໄປ;

3. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10.000.000 ກີບ ຕາມອາຍຸຂອງຮຸ້ນກູ້ ແລະ ຕ້ອງຊຳລະພາຍໃນໄຕມາດ 1 ຂອງປີຖັດໄປ. ຍົກເວັ້ນ ບໍລິສັດອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງ ປະເທດ ທີ່ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ມາດຕາ 14 ຂໍ້ຫ້າມ**

ຫ້າມບໍລິສັດ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບໃບຢັ້ງຢືນການຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍການສະໜອງຂໍ້ມູນ ແລະ ເອກະສານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ໃຫ້ແກ່ ສຳນັກງານຄະນະກຳມະການຄອງຫຼັກຊັບ;

3. ອອກຈຳໜ່າຍຮຸ້ນກູ້ປ່ຽນສະພາບຢູ່ຕ່າງປະເທດ;

4. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 16 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບໍລິສັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ມີການລາຍງານຜົນການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;
3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂໍ້ 1 ແລະ ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້;
4. ອອກຈຳໜ່າຍຮຸ້ນກູ້ປ່ຽນສະພາບຢູ່ຕ່າງປະເທດ;
5. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງມີມູນຄ່າຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;
2. ບໍລິສັດ ທີ່ໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບໃບຢັ້ງຢືນການຮັບຮູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງທຶນທີ່ລະດົມໄດ້ ແລະ ຜູ້ມີສ່ວນກ່ຽວ ຂ້ອງໂດຍກົງ ຈະຖືກປັບໃໝ 50.000.000 ກີບ 100.000.000 ກີບ;
3. ບໍລິສັດ ທີ່ໄປອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ມີການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ມີການປອມແປງ ເອກະສານ ແລະ ຂໍ້ມູນໃນທຸກຮູບແບບ ຈະຖືກປັບໃໝ 70.000.000 ກີບ ຫາ 100.000.000 ກີບ ໃນກໍລະນີທີ່ຍັງບໍ່ທັນໄດ້ອອກຈຳໜ່າຍຮຸ້ນກູ້ ຫຼື ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງເງິນທີ່ລະດົມໄດ້ ໃນກໍລະນີທີ່ໄດ້ອອກຈຳໜ່າຍຮຸ້ນກູ້ແລ້ວ. ພາກສ່ວນກ່ຽວຂ້ອງ ແລະ ບຸກຄົນທີ່ກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ 50.000.000 ກີບ ຫາ 100.000.000 ກີບ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມການກຳນົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະ ຫຼື ຍົກເລີກ ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ;

3. ຖອນໃບຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ;

4. ເຜີຍແຜ່ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 18 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ສະບັບເລກທີ 0022/ຄຄຊ, ລົງວັນທີ 26 ຕຸລາ 2016.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ສອນໄຊ ສິດພະໄຊ